ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງ ກະສິກຳ ແລະ ປ່າໄມ້

ກົມປູກຝັງ

ເລກທີ 1152 /ກປຝ

ນະຄອນຫລວງວຽງຈັນ, ວັນທີ 27 AUG 2012

**ແຈ້ງການແນະນຳ**

ຮຽນ: ທ່ານ ຫົວໜ້າ ຂະແໜງປູກຝັງ ນະຄອນຫຼວງ ແລະ ແຂວງທົ່ວປະເທດ

ເລື່ອງ: ການນຳໃຊ້ພັດສະດຸຫຸ້ມຫໍ່ ແລະ ຜະລິດຕະພັນໄມ້ ໃນການເຄື່ອນຍ້າຍວັດຖຸຕ່າງໆ ອອກຈາກ ສປປ ລາວ ໄປຕ່າງປະເທດ

- ອີງຕາມ ກົດໝາຍ ວ່າດ້ວຍການປ້ອງກັນພືດ ສະບັບເລກທີ 06/ສພຊ, ລົງວັນທີ 9 ທັນວາ 2008;
- ອີງຕາມ ຄຳສັ່ງຂອງລັດຖະມົນຕີ ກ່ຽວກັບການເພີ່ມທະວີຄວາມເອົາໃຈໃສ່ໃນການຄຸ້ມຄອງ ແລະກວດກາສຸຂານາໄມພືດທີ່ຈະສົ່ງອອກ ໃຫ້ສອດຄ່ອງກັບລະບຽບການດ້ານສຸຂານາໄມພືດ ຂອງປະເທດປາຍທາງ ສະບັບເລກທີ 2136/ກປ, ລົງວັນທີ 26/10/2011.
- ອີງຕາມ ແຈ້ງການຂອງ ຂະແໜງການປ້ອງກັນ ແລະ ກັກກັນພືດ (APHIS) ຂອງສະຫາລັດອາເມລິກາ ສະບັບເລກທີ APHIS TH030/2012, ລົງວັນທີ່ 08/05/2012.

ໃນປະຈຸບັນນີ້ ປະເທດຕ່າງໆທົ່ວໂລກ ໄດ້ເພີ້ມທະວີຄວາມເອົາໃຈໃສ່ໃນການສະກັດກັ້ນ ສັດຕູພືດ ຈາກປະເທດອື່ນເພື່ອບໍ່ໃຫ້ເຂົ້າມາທຳລາຍພືດຜົນ ໃນປະເທດຂອງຕົນ ໂດຍຜ່ານການນຳໃຊ້ມາດຕະການສຸຂານາໄມພືດ ຕໍ່ກັບການເຄື່ອນຍ້າຍວັດຖຸທີ່ມີຄວາມສ່ຽງຕໍ່ສັດຕູພືດ ທີ່ເປັນອັນຕະລາຍຕິດແປດໄປນຳ, ໂດຍສະເພາະແມ່ນພັດສະດຸຫຸ້ມຫໍ່ ຫຼື ຕູ້ບັນຈຸສິນຄ້າທີ່ເຮັດດ້ວຍໄມ້ ຊຶ່ງກຳລັງຖືກຄວບຄຸມຢ່າງເຂັ້ມງວດທາງດ້ານການນຳໃຊ້ມາດຕະການ ສຸຂານາໄມພືດ ກ່ອນການນຳເຂົ້າຈາກຫຼາຍປະເທດ ບົນພື້ນຖານປະຕິບັດຕາມມາດຕະຖານສາກົນ ດ້ານສຸຂານາໄມພືດ ທີ່ໄດ້ກຳນົດໄວ້ ໃນສົນທິສັນຍາປ້ອງກັນພືດສາກົນ.

ດັ່ງນັ້ນ, ເພື່ອອຳນວຍຄວາມສະດວກ ທາງດ້ານການຄ້າ ແລະ ສອດຄ່ອງກັບລະບຽບຫຼັກການ ແລະ ເງື່ອນໄຂຂອງປະເທດນຳເຂົ້າ, ກົມປູກຝັງຈຶ່ງແຈ້ງບາງຂໍ້ມູນທີ່ຈຳເປັນ ໃນການປະຕິບັດຕໍ່ກັບພັດສະດຸຫຸ້ມຫໍ່ທີ່ເປັນເປົ້າໝາຍຄືດັ່ງນີ້:

**1.** ປະເທດທີ່ນຳໃຊ້ຂໍ້ບັງຄັບໃນການຄວບຄຸມການນຳໃຊ້ພັດສະດຸຫຸ້ມຫໍ່ ແລະ ຜະລິດຕະພັນໄມ້ ໃນການເຄື່ອນຍ້າຍວັດຖຸຕ່າງໆ ເຂົ້າມາໃນປະເທດ ປະກອບມີຄື: Argentina [ARG], Australia [AUS], Belgium [BEL], Canada [CAN], Chile [CHL], China [CHN], Colombia [COL], Costa Rica [CRI], Czech Republic [CZE], Denmark [DNK], Estonia [EST], Finland [FIN], France

[FRA], Germany [DEU], Greece [GRC], Hungary [HUN], India [IND], Japan [JPN], Korea, Republic of [KOR], Latvia [LVA], Malaysia [MYS], Netherlands [NLD], Peru [PER], Poland [POL], Spain [ESP], Tunisia [TUN], United Kingdom [GBR], United States of America [USA].

2. ພັດສະດຸຫຸ້ມຫໍ່ ແລະ ຜະລິດຕະພັນໄມ້ ທີ່ເປັນເປົ້າໝາຍຄວບຄຸມປະກອບມີ: ໄມ້ໝອນຮອງພື້ນ, ຖ້ານໄມ້ວາງພື້ນ ຫຼື ໄມ້ປາແລັດ (Pallets), ກັບ ຫຼື ກ່ອງທີ່ເຮັດດ້ວຍໄມ້ (Wooden Cases ຫຼື Wooden Crates), ໄມ້ຄ້ຳ ແລະ ຂັ້ນສິນຄ້າ (Wooden Crates) ຕ່າງໆ ແລະ ກົ້ສາຍເຄເບີນ (Cable Drums).

ພັດສະດຸຫຸ້ມຫໍ່ ແລະ ຜະລິດຕະພັນໄມ້ ທີ່ກ່າວມາຂ້າງເທິງນັ້ນ ແມ່ນມີຂໍ້ຍົກເວັ້ນຊຶ່ງບໍ່ໄດ້ກວມເອົາຄື:

- ພັດສະດຸຫຸ້ມຫໍ່ ແລະ ຜະລິດຕະພັນໄມ້ ທີ່ມີຄວາມໜາ ເທົ່າກັບ ຫຼື ໜ້ອຍກວ່າ 6 ມິນລີແມັດ.
- ຜະລິດຕະພັນໄມ້ທີ່ຜ່ານການປຸງແຕ່ງ ເຊັ່ນ: ໄມ້ຝານບາງ, ໄມ້ອັດ (Plywood or veneer, Particle board, oriented strand board) ຊຶ່ງຜ່ານການປຸງແຕ່ງ ໂດຍໃຊ້ກາວໜຽວ, ຄວາມຮ້ອນ ຫຼື ແຮງດັນ.
- ຖັງເຫຼົ້າວາຍ ແລະ ກະດອນອັດ ເຮັດດ້ວຍໄມ້ ທີ່ຖືກຜ່ານຄວາມຮ້ອນໃນຂະບວນການຜະລິດ.
- ກັບ ຫຼື ກ່ອງຂອງຂວັນ ສຳລັບໃສ່ເຫຼົ້າວາຍ, ຢາສູບຊິກາ ແລະ ສິນຄ້າອື່ນໆ ທີ່ເຮັດດ້ວຍໄມ້ ແລະ ໄດ້ຜ່ານການປຸງແຕ່ງ ໂດຍປາສະຈາກສັດຕູພືດ.
- ຂີ້ເລື່ອຍໄມ້ (Sawdust), ຂີ້ກົບໄມ້ (Wood shavings) ແລະ ເສດໄມ້ທີ່ເປັນເສັ້ນ (Wood wool)
- ຜະລິດຕະພັນໄມ້ ທີ່ໄດ້ປະກອບໂດຍຖາວອນ ຕິດກັບ ພາຫະນະຂົນສົ່ງເຄື່ອງ ຫຼື ຕູ້ບັນຈຸ.

3. ສັດຕູພືດເປົ້າໝາຍທີ່ຕ້ອງຫ້າມຕິດແປດໄປກັບວັດຖຸຄວບຄຸມຄື:

- ມອດເຈາະເປືອກໄມ້ ຕະກູນ Anobiidae, ມອດເຈາະໄມ້ ຕະກູນ Bostrichidae, ມອດເຈາະໄມ້ ຕະກູນ Buprestidae, ດ້ວງງວງເຈາະລຳຕົ້ນ ຕະກູນ Cerambycidae, ມອດງວງເຈາະໄມ້ ຕະກູນ Curculionidae, ແມງປວກ ໃນໝວດ Isoptera, ມອດເຈາະໄມ້ ຕະກູນ Lyctidae, ແມງດ້ວງເຈາະເປືອກ ຕະກູນ Scolytidae ແລະ ແມງໄມ້ປີກບາງ ຕະກູນ Sricidae.

4. ມາດຕະການປະຕິບັດໃນການນຳໃຊ້ພັດສະດຸຫຸ້ມຫໍ່ ແລະ ຜະລິດຕະພັນໄມ້, ກ່ອນສົ່ງອອກຈາກ ສປປ ລາວ ໄປຕ່າງປະເທດ.

- ອີງຕາມມາດຕະຖານສາກົນ ເລກທີ 15 ທີ່ກຳນົດໂດຍອົງການປ້ອງກັນພືດແຫ່ງຊາດແມ່ນຕ້ອງຈັດຕັ້ງການບຳບັດ ຫຼື ກຳຈັດສັດຕູພືດດ້ວຍການຮົມຢາເມທີນໂບມາຍ (Methyl Bromide) ແລະ ການອົບອາຍຮ້ອນ (Heat Treatment) ຫຼັງຈາກນັ້ນມີການຈ້ຳກາຢັ້ງຢືນ ໃສ່ເທິງພັດສະດຸໄມ້ດັ່ງກ່າວ ຊຶ່ງສະແດງເຄື່ອງໝາຍລຸ່ມນີ້:

| | |
|---|---|
| IPPC | LA - 000<br>YY |

YY ໝາຍເຖິງວິທີການນຳໃຊ້ເພື່ອບຳບັດດ້ວຍວິທີການຕ່າງ ໆ ປະກອບມີຄື: MB ໝາຍເຖິງ ການຮົມຢາ Methyl Bromide ຫຼື HT ໝາຍເຖິງການອົບອາຍຮ້ອນ Heat Treatment.

*ຂໍ້ກຳນົດຕ່າງໆ ກ່ຽວກັບກາຈ້ຳຢັ້ງຢືນ ແມ່ນໃຫ້ອີງໃສ່ ແຈ້ງການຂອງກະຊວງກະສິກຳ ແລະ ປ່າໄມ້ ເລກທີ 0034/ກປ.06 ລົງວັນທີ 18/1/2006.

5. ນິຕິບຸກຄົນ ຫຼື ການຈັດຕັ້ງທີ່ຕ້ອງການດຳເນີນທຸລະກິດ ຫຼື ຈັດຕັ້ງການບຳບັດດ້ວຍການຣົມຢາເມທິນໂບມາຍ ແລະ ການອົບອາຍຮ້ອນ ຕ້ອງປະຕິບັດຕາມຂໍ້ແນະນຳເຕັກນິກຂອງກົມປູກຝັງ ສະບັບເລກທີ 053/ປຝ.06 ລົງວັນທີ 23/1/2006 ແລະ ໄດ້ຮັບອະນຸຍາດຂຶ້ນທະບຽນວິຊາການຢູ່ກົມປູກຝັງຊຶ່ງເປັນຕົວແທນຂອງອົງການປ້ອງກັນພືດແຫ່ງຊາດ.

- ສຳລັບຜູ້ສົ່ງອອກທີ່ມີຈຸດປະສົງຕ້ອງການຮັບບໍລິການບຳບັດພັດສະດຸຫຸ້ມຫໍ່ ແລະ ຜະລິດຕະພັນໄມ້ທີ່ເປັນເປົ້າໝາຍຄວບຄຸມ, ກະລຸນາພົວພັນ ຫຼື ສອບຖາມມາຍັງກົມປູກຝັງກ່ຽວກັບບໍລິສັດທີ່ໄດ້ຮັບການຂຶ້ນທະບຽນ.

6. ຂໍ້ມູນປະກອບໃນແຈ້ງການສະບັບນີ້ ເປັນບ່ອນອີງພື້ນຖານໃນການຈັດຕັ້ງປະຕິບັດ. ແຕ່ເຖິງຢ່າງໃດກໍ່ຕາມໃນການສົ່ງອອກຕົວຈິງແມ່ນຮຽກຮ້ອງໃຫ້ຜູ້ສົ່ງອອກຕ້ອງໄດ້ຊອກຫາຂໍ້ມູນລະບຽບການບັງຄັບໃຊ້ຕົວຈິງເພີ່ມເຕີມຢ່າງລະອຽດໃນແຕ່ລະໄລຍະ ພ້ອມທັງແຈ້ງລາຍງານໃຫ້ ກົມປູກຝັງຊາບເພື່ອຊອກຫາມາດຕະການແກ້ໄຂໃຫ້ທັນເວລາ ແລະ ສອດຄ່ອງກັບຂໍ້ກຳນົດຂອງປະເທດນຳເຂົ້າ ແລະ ສົ່ງຜ່ານ.

7. ມອບໃຫ້ຂະແໜງປູກຝັງທົ່ວປະເທດ ເຜີຍແຜ່ຂໍ້ມູນແຈ້ງການສະບັບນີ້ໃຫ້ພາກສ່ວນທີ່ກ່ຽວຂ້ອງຊາບຢ່າງ ທົ່ວເຖິງ ແລະ ລາຍງານໃຫ້ກົມປູກຝັງກ່ຽວກັບຜົນໄດ້ຮັບ, ບັນຫາ ແລະ ຂໍ້ຫຍຸ້ງຍາກເປັນແຕ່ລະໄລຍະ.

ດັ່ງນັ້ນ, ຈຶ່ງແຈ້ງມາຍັງທ່ານເພື່ອຊາບ ແລະ ຈັດຕັ້ງຜັນຂະຫຍາຍເນື້ອໃນແຈ້ງການແນະນຳສະບັບນີ້ໃຫ້ມີປະສິດທິຜົນສູງ.

ຫົວໜ້າກົມປູກຝັງ

ກະຊວງກະສິກຳ ແລະ ປ່າໄມ້ — ກົມປູກຝັງ

**ດຣ. ມົນທາທິບ ຈັນເພັງໄຊ**

ບ່ອນສົ່ງ:

- ລັດຖະມົນຕີຊ່ວຍວ່າການ ກປ ຜູ້ຊີ້ນຳວຽກງານ SPS — 1 ສະບັບ (ເພື່ອຊາບ ແລະ ໃຊ້ຕາງລາຍງານ)
- ຫ້ອງການ ກະຊວງ ກະສິກຳ ແລະ ປ່າໄມ້ — 1 ສະບັບ (ເພື່ອຊາບ)
- ກົມແຜນການ (SPS Enquiry Point), ກະຊວງ ກປ . — 1 ສະບັບ (ເພື່ອຊາບ)
- ກົມກວດກາ, ກະຊວງ ກປ. — 1 ສະບັບ (ເພື່ອຊາບ)
- ກົມປ່າໄມ້ — 1 ສະບັບ (ເພື່ອຊາບ)
- ກົມນະໂຍບາຍການຄ້າຕ່າງປະເທດ, ກະຊວງ ອຄ. — 1 ສະບັບ (ເພື່ອຊາບ)
- ກົມນຳເຂົ້າສົ່ງອອກ, ກະຊວງ ອຄ. — 1 ສະບັບ (ເພື່ອຊາບ)
- ກົມຂົນສົ່ງ, ກະຊວງໂຍທາທິການ ແລະ ຂົນສົ່ງ — 1 ສະບັບ (ເພື່ອຊາບ)
- ເລຂາທິການ ສະພາການຄ້າ ແລະ ອຸດສາຫະກຳແຫ່ງຊາດ — 1 ສະບັບ (ເພື່ອຊາບ)
- ພະແນກກະສິກຳ ແລະ ປ່າໄມ້ ແຂວງ, ນະຄອນ ບ່ອນລະ — 1 ສະບັບ (ເພື່ອຊາບ)
- ເກັບມ້ຽນ 1 ສະບັບ